

**ໂດຍປະທານດີເຕີ
ແອັຟ ອຸກດອບ**
ທີ່ປຶກສາທີສອງໃນ
ຝ່າຍປະທານສູງສຸດ

# ກອງປະຊຸມໃຫຍ່— ບໍ່ແມ່ນພອນທຳມະດາ

ສະມາຊິກທີ່ດີຄົນໜຶ່ງຂອງສາສນາຈັກໄດ້ເວົ້າລົມກັບຄົນຂ້າງບ້ານຄົນໜຶ່ງຜູ້ບໍ່ໄດ້ນັບຖືສາສນາດຽວກັນກັບພວກເຮົາ. ເມື່ອໄດ້ເວົ້າລົມກັນເລື່ອງກອງປະຊຸມໃຫຍ່, ຄົນຂ້າງບ້ານໄດ້ຖາມວ່າ, "ເຈົ້າເວົ້າວ່າ ເຈົ້າມີສາດສະດາ ແລະ ອັກຄະສາວົກແມ່ນຊັ້ນບໍ? ແລະ ປີລະສອງເທື່ອໃນກອງປະຊຸມໃຫຍ່ຖ່າຍທອດທົ່ວໂລກ ພວກເພິ່ນໄດ້ເປີດເຜີຍຄຳຂອງພຣະເຈົ້າແມ່ນຊັ້ນບໍ?"

"ແມ່ນແທ້ໆ," ສະມາຊິກຄົນນັ້ນໄດ້ຕອບໄປດ້ວຍຄວາມແນ່ນອນໃຈ.

ຄົນຂ້າງບ້ານໄດ້ຄິດກ່ຽວກັບຄຳຕອບນັ້ນບຶດໜຶ່ງ. ເບິ່ງຄືວ່າລາວມີຄວາມສົນໃຈແທ້ໆ ແລະ ຈາກນັ້ນໄດ້ຖາມວ່າ, "ພວກເພິ່ນໄດ້ເວົ້າຫຍັງແດ່ໃນກອງປະຊຸມໃຫຍ່ ເທື່ອແລ້ວນີ້?"

ເມື່ອເຖິງຕອນນີ້ ສະມາຊິກທີ່ດີຄົນນັ້ນຂອງສາສນາຈັກຜູ້ຕື່ນເຕັ້ນທີ່ຈະແບ່ງປັນພຣະກິດຕິຄຸນກັບຮູ້ສຶກລະອາຍໃຈ. ລາວພະຍາຍາມຄິດ, ແມ່ນແຕ່ຄຳປາໄສໜຶ່ງລາວກໍຄິດບໍ່ອອກວ່າມັນກ່ຽວກັບຫຍັງ.

ເພື່ອນຂອງລາວເຫັນວ່າລາວມີບັນຫາ ແລະ ໄດ້ເວົ້າວ່າ, "ເຈົ້າໝາຍຄວາມວ່າ ພຣະເຈົ້າກ່າວກັບມະນຸດໃນວັນເວລາຂອງເຮົາ ແລະ ເຈົ້າຈື່ບໍ່ໄດ້ຊັ້ນບໍວ່າພຣະອົງເວົ້າຫຍັງ?"

ຜູ້ເປັນສະມາຊິກຮູ້ສຶກຖ່ອມຕົວຫລາຍເມື່ອໄດ້ຍິນຄຳເວົ້ານັ້ນ. ລາວໄດ້ສາບານວ່າ ລາວຈະເຮັດດີຂຶ້ນກວ່າເກົ່າທີ່ຈະຈື່ຈຳຖ້ອຍຄຳຊຶ່ງກ່າວໂດຍຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ ຢູ່ໃນກອງປະຊຸມໃຫຍ່.

ເຮົາທຸກຄົນຮູ້ວ່າ ມັນຍາກຫລາຍຂະໜາດໃດທີ່ຈະຈື່ຈຳຂ່າວສານທັງໝົດຂອງກອງປະຊຸມໃຫຍ່, ແລະ ຂ້າພະເຈົ້າກໍແນ່ໃຈວ່າເຮົາບໍ່ຈຳເປັນທີ່ຈະລະອາຍໃຈຖ້າເຮົາບໍ່ຈື່ໝົດທຸກຢ່າງ. ເຖິງຢ່າງໃດກໍຕາມ, ຂ່າວສານຢູ່ໃນກອງປະຊຸມໃຫຍ່ໄດ້ຖືກມອບໃຫ້ເປັນຂອງປະທານ ແລະ ເປັນພອນຈາກສະຫວັນ ໂດຍສະເພາະສຳລັບສະຖານະການໃນຊີວິດສ່ວນຕົວຂອງເຮົາ.

ໃນການຕຽມພ້ອມສຳລັບກອງປະຊຸມໃຫຍ່, ຂ້າພະເຈົ້າຂໍແນະນຳຄວາມຄິດທີ່ງ່າຍໆສາມຢ່າງທີ່ອາດສາມາດຊ່ອຍເຫລືອເຮົາໃຫ້ຮັບເອົາ, ຈື່ຈຳ, ແລະ ນຳໃຊ້ຖ້ອຍຄຳທີ່ກ່າວໂດຍຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ ໄດ້ຫລາຍກວ່າເກົ່າ.

### 1. ສະມາຊິກຂອງສາສນາຈັກມີສິດທີ່ຈະຮັບເອົາການເປີດເຜີຍສ່ວນຕົວ ເມື່ອເຂົາເຈົ້າຟັງ ແລະ ສຶກສາຖ້ອຍຄຳທີ່ດົນໃຈຈາກກອງປະຊຸມໃຫຍ່.

ໃນຂະນະທີ່ເຮົາຕຽມສຳລັບກອງປະຊຸມໃຫຍ່, ຂ້າພະເຈົ້າຂໍເຊື້ອເຊີນທ່ານໃຫ້ໄຕ່ຕອງກ່ຽວກັບຄຳຖາມທີ່ທ່ານຢາກໄດ້ຮັບຄຳຕອບ. ຍົກຕົວຢ່າງ, ທ່ານອາດຢາກໄດ້ຮັບການຊີ້ນຳ ແລະ ການນຳພາໂດຍພຣະຜູ້ເປັນເຈົ້າກ່ຽວກັບການທ້າທາຍທີ່ທ່ານພວມປະເຊີນຢູ່.

ຄຳຕອບຕໍ່ຄຳຖາມໃດໜຶ່ງໂດຍສະເພາະຂອງທ່ານອາດມາເຖິງຈາກບົດຄຳປາໄສໃດໜຶ່ງ ຫລື ຈາກຂໍ້ຄວາມໃດໜຶ່ງ. ບາງເທື່ອຄຳຕອບອາດມາເຖິງໃນຖ້ອຍຄຳ, ໃນຂໍ້ຄວາມ, ຫລື ໃນເພງທີ່ບໍ່ກ່ຽວພັນກັນເລີຍ. ຫົວໃຈທີ່ເຕັມໄປດ້ວຍຄວາມກະຕັນຍູສຳລັບພອນຂອງຊີວິດ ແລະ ຄວາມປາຖະໜາຢ່າງຍິ່ງທີ່ຈະຟັງ ແລະ ເຮັດຕາມຖ້ອຍຄຳແນະນຳ ຈະຕຽມທາງສຳລັບການເປີດເຜີຍສ່ວນຕົວ.

**2. ຢ່າຖືວ່າຂ່າວສານບໍ່ສຳຄັນເພາະເຄີຍໄດ້ຍິນມັນມາແລ້ວ.**

ສາດສະດາມັກຈະສອນລື້ມຄືນເລື້ອຍໆ; ມັນເປັນກົດແຫ່ງການຮຽນຮູ້. ທ່ານຈະໄດ້ຍິນຄຳເກົ່າຢູ່ໃນຫົວຂໍ້ ແລະ ໃນຄຳສອນຢູ່ກອງປະຊຸມໃຫຍ່. ຂ້າພະເຈົ້າຂໍໃຫ້ທ່ານແນ່ໃຈໄດ້ວ່າ: ນີ້ບໍ່ແມ່ນເປັນເພາະໝົດຄວາມຄິດ ຫລື ການປະດິດຄິດສ້າງ. ເຮົາຈະສືບຕໍ່ໄດ້ຍິນຂ່າວສານກ່ຽວກັບເລື່ອງດຽວກັນນັ້ນ ເພາະພຣະຜູ້ເປັນເຈົ້າສອນເຮົາ ແລະ ຈາລຶກຫລັກທຳຂັ້ນພື້ນຖານບາງຢ່າງທີ່ສຳຄັນຊຶ່ງນິລັນດອນທີ່ຕ້ອງເຂົ້າໃຈ ແລະ ປະຕິບັດຕາມກ່ອນເຮົາຈະເລີ່ມຕົ້ນເຮັດສິ່ງອື່ນໄວ້ຢູ່ໃນຈິດໃຈ ແລະ ຫົວໃຈຂອງເຮົາ. ຜູ້ສ້າງທີ່ສະຫລາດຈະສ້າງພື້ນຖານ ກ່ອນຈະສ້າງຝາ ແລະ ຫລັງຄາ.

**3. ຖ້ອຍຄຳທີ່ກ່າວໃນກອງປະຊຸມໃຫຍ່ຄວນເປັນເຂັມທິດຊີ້ທາງໃຫ້ເຮົາໃນລະຫວ່າງເດືອນທີ່ຈະມາເຖິງ.**

ຖ້າເຮົາຟັງ ແລະ ເຮັດຕາມການດົນໃຈຂອງພຣະວິນຍານ, ມັນຈະເປັນເໝືອນດັ່ງເລຍໂຮນາ, ນຳພາເຮົາຜ່ານບ່ອນທີ່ເຮົາບໍ່ຮູ້ຈັກ, ຜ່ານຮ່ອມພູ ແລະ ຜາອັນຫຍຸ້ງຍາກທີ່ຢູ່ຂ້າງໜ້າ (ເບິ່ງ 1 ນີໄຟ 16).

ນັບແຕ່ໂລກເປັນມາ, ພຣະເຈົ້າໄດ້ແຕ່ງຕັ້ງສາດສະດາໄວ້ ຜູ້ກ່າວຄວາມປະສົງຂອງສະຫວັນແກ່ຜູ້ຄົນໃນວັນເວລາຂອງເຂົາ. ມັນເປັນໜ້າທີ່ຮັບຜິດຊອບຂອງເຮົາທີ່ຈະຟັງ ແລະ ຈາກນັ້ນນຳໃຊ້ຂ່າວສານທີ່ພຣະຜູ້ເປັນເຈົ້າຈັດຕຽມໄວ້ສຳລັບເຮົາ.

ພຣະບິດາເທິງສະຫວັນທີ່ຊົງຮັກ ແລະ ມີເມດຕາຂອງເຮົາ ບໍ່ເຄີຍປະຖິ້ມ ແລະ ຈະບໍ່ປະຖິ້ມລູກໆຂອງພຣະອົງ. ພຣະອົງໄດ້ແຕ່ງຕັ້ງອະຄັກສາວົກ ແລະ ສາດສະດາໄວ້ໃນປະຈຸບັນນີ້, ດັ່ງເຊັ່ນໃນວັນເວລາທີ່ຜ່ານມາ. ພຣະອົງສືບຕໍ່ເປີດເຜີຍຖ້ອຍຄຳຂອງພຣະອົງແກ່ພວກເພິ່ນ.

ຊ່າງເປັນສິດທິພິເສດແທ້ໆທີ່ໄດ້ຍິນຂ່າວສານຂອງພຣະເຈົ້າສຳລັບເຮົາແຕ່ລະຄົນໃນລະຫວ່າງກອງປະຊຸມໃຫຍ່! ຂໍໃຫ້ເຮົາຈົ່ງຕຽມພ້ອມເປັນຢ່າງດີສຳລັບພອນອັນຍິ່ງໃຫຍ່ແຫ່ງການນຳພາຈາກສະຫວັນນີ້ ຊຶ່ງກ່າວໂດຍຜູ້ຮັບໃຊ້ທີ່ໄດ້ຮັບການເລືອກຂອງພຣະອົງ.

ເພາະນີ້ບໍ່ແມ່ນພອນທຳມະດາ.

---

**ການສອນຈາກຂ່າວສານນີ້**

- ອ່ານຂ່າວສານນຳກັນ. ຊຸກຍູ້ຄອບຄົວໃຫ້ຊອກຫາສິ່ງທີ່ຈະຟັງໃນລະຫວ່າງກອງປະຊຸມໃຫຍ່.
- ເພື່ອຊ່ອຍເດັກນ້ອຍໃຫ້ນຳໃຊ້ຄຳແນະນຳຂອງປະທານອຸກດອບ, ໃຫ້ສະແດງຮູບພາບຂອງບັນດາເຈົ້າໜ້າທີ່ຊັ້ນຜູ້ໃຫຍ່ (ມີຢູ່ໃນວາລະສານ *Liahona* ສະບັບກອງປະຊຸມໃຫຍ່). ບອກໃຫ້ເຂົາຮູ້ວ່າ ຝ່າຍປະທານສູງສຸດ ແລະ ສະພາອັກຄະສາວົກສິບສອງຈະກ່າວໃນກອງປະຊຸມໃຫຍ່. ຊຸກຍູ້ເດັກນ້ອຍໃຫ້ຟັງກອງປະຊຸມໃຫຍ່ ແລະ ແຕ້ມຮູບເພື່ອຊ່ອຍເຂົາໃຫ້ຈື່ຈຳສິ່ງທີ່ເຂົາໄດ້ຮຽນຮູ້. ພໍ່ແມ່ສາມາດເປີດເບິ່ງ conferencegames.lds.org ສຳລັບກິດຈະກຳໃຫ້ລູກໆເຮັດລະຫວ່າງກອງປະຊຸມໃຫຍ່.

## ຄົນໜຸ່ມ

# ດີ, ດີກວ່າ, ດີທີ່ສຸດ

**ໂດຍ ແມຣີ-ເຊເລັສ ຫລຸຍ**

ໃນຄຳປາໄສຈາກກອງປະຊຸມໃຫຍ່ເດືອນຕຸລາ ປີ 2007, ແອວເດີ ດາລິນ ເອັຈ ໂອກ ແຫ່ງສະພາອັກຄະສາວົກສິບສອງໄດ້ກ່າວກ່ຽວກັບກິດຈະກຳທີ່ "ດີ, ດີກວ່າ, ແລະ ດີທີ່ສຸດ" ເມື່ອເພິ່ນກ່າວເຖິງຕອນກ່ຽວກັບ "ເດັກນ້ອຍມີກິດຈະກຳເຮັດຫລາຍເກີນໄປ," ຂ້າພະເຈົ້າຮູ້ສຶກຜິດ.

ຂ້າພະເຈົ້າຮູ້ວ່າ ຂ້າພະເຈົ້າເຮັດຫລາຍເກີນໄປ. ຂ້າພະເຈົ້າຮ່ວມສະແດງລະຄອນ, ເອົາຫ້ອງທີ່ຍາກຢູ່ໃນໂຮງຮຽນ, ແລະ ກໍມີສ່ວນຮ່ວມໃນກິດຈະກຳອື່ນໆອີກຫລາຍຢ່າງ. ຂ້າພະເຈົ້າບໍ່ໄດ້ໄປຮ່ວມກິດຈະກຳຂອງກຸ່ມຍິງໜຸ່ມເປັນປະຈຳ, ແລະ ໃນວັນອາທິດ ຂ້າພະເຈົ້າກໍຫຍຸ້ງຢູ່ກັບການພະຍາຍາມເຮັດການບ້ານໃຫ້ແລ້ວ. ການຝຶກດົນຕີ ແລະ ກວດກາໜັງສືພິມຂອງໂຮງຮຽນບໍ່ໄດ້ເປັນເລື່ອງມ່ວນອີກຕໍ່ໄປ ແລະ ມັນກາຍເປັນວຽກງານ.

ຄຳປາໄສຂອງແອວເດີ ໂອກ ເຮັດໃຫ້ຂ້າພະເຈົ້າສຳຫລວດກວດກາເບິ່ງລາຍການກິດຈະກຳຂອງຂ້າພະເຈົ້າ. ກິດຈະກຳຂອງຂ້າພະເຈົ້າແມ່ນດີທຸກຢ່າງ, ແຕ່ມີຫລາຍໂພດ. ຂ້າພະເຈົ້າຕ້ອງເລືອກເອົາອັນທີ່ດີທີ່ສຸດ. ໃນຂະນະທີ່ຂ້າພະເຈົ້າຕັດສິນໃຈວ່າຈະຖິ້ມກິດຈະກຳອັນໃດ, ຂ້າພະເຈົ້ານຶກໄດ້ວ່າ ພຣະກິດຕິຄຸນຂອງພຣະເຢຊູຄຣິດເປັນສິ່ງສຳຄັນທີ່ດີທີ່ສຸດທີ່ຜູ້ຄົນສາມາດມີໄດ້. ຂ້າພະເຈົ້າໄດ້ຂຽນການອະທິຖານ ແລະ ການສຶກສາພຣະຄຳພີໃສ່ໃນລາຍການກ່ອນໝູ່, ແລະ ນັບແຕ່ນັ້ນມາ, ຊີວິດຂອງຂ້າພະເຈົ້າກໍໄດ້ຂຶ້ນແດ່.

ແອວເດີ ໂອກ ໄດ້ສອນຂ້າພະເຈົ້າວ່າ ເມື່ອເຮົາເຮັດສິ່ງທີ່ພຣະຜູ້ເປັນເຈົ້າຢາກໃຫ້ເຮົາເຮັດ *ກ່ອນໝູ່,* ແລ້ວທຸກສິ່ງຈະເຂົ້າທີ່ຂອງມັນຢ່າງເປັນລະບຽບຮຽບຮ້ອຍ. ຖ້າຫາກຂ້າພະເຈົ້າສຶກສາພຣະຄຳພີຂອງຂ້າພະເຈົ້າກ່ອນຂ້າພະເຈົ້າຫລິ້ນເກມ ຫລື ແມ່ນແຕ່ກ່ອນຂ້າພະເຈົ້າເຮັດການບ້ານ, ແລ້ວທຸກສິ່ງທີ່ສຳຄັນຈະສຳເລັດ. ເມື່ອຂ້າພະເຈົ້າໃຫ້ພຣະຜູ້ເປັນເຈົ້າເປັນຈຸດໃຈກາງໃນຊີວິດຂອງຂ້າພະເຈົ້າ, ແທນທີ່ຈະເກັບພຣະອົງໄວ້ທີຫລັງ, ຊີວິດຂອງຂ້າພະເຈົ້າໄດ້ມີຄວາມສະຫງົບ ແລະ ຄວາມສຳເລັດຜົນຫລາຍຕື່ມຂຶ້ນ.

ບັດນີ້ ຂ້າພະເຈົ້າໄດ້ຟັງຄຳແນະນຳຈາກກອງປະຊຸມໃຫຍ່ຢ່າງລະມັດລະວັງ!

## ເດັກນ້ອຍ

### ຂ້າພະເຈົ້າສາມາດພົບຄຳຕອບຜ່ານກອງປະຊຸມໃຫຍ່

ປະທານອຸກດອບສອນວ່າ ຖ້າຫາກທ່ານຄິດຫາຄຳຖາມສອງສາມຢ່າງກ່ອນກອງປະຊຸມໃຫຍ່, ພຣະຜູ້ເປັນເຈົ້າສາມາດກ່າວກັບທ່ານຜ່ານສາດສະດາ ແລະ ອັກຄະສາວົກຂອງພຣະອົງໃນລະຫວ່າງກອງປະຊຸມໃຫຍ່.

1. ເປັນຄອບຄົວ ຫລື ເປັນຫ້ອງ, ໃຫ້ສົນທະນາກ່ຽວກັບສິ່ງທີ່ເຈົ້າຕ້ອງການຢາກຮຽນຮູ້, ບໍ່ວ່າຈະເປັນສ່ວນບຸກຄົນ ຫລື ນຳກັນເປັນກຸ່ມ. (ຍົກຕົວຢ່າງ: ເຮົາຈະເພີ່ມຄວາມເຂັ້ມແຂງໃຫ້ແກ່ປະຈັກພະຍານຂອງເຮົາໄດ້ແນວໃດ? ເຮົາຄວນຈັດການກັບບັນຫາຢູ່ໂຮງຮຽນໃນວິທີໃດ?) ໃຫ້ຂຽນຄຳຖາມຂອງເຈົ້າໃສ່ໃນເຈ້ຍໃບໜຶ່ງ ຫລື ໃສ່ໃນປຶ້ມບັນທຶກສ່ວນຕົວຂອງເຈົ້າ.
2. ໃນສອງສາມອາທິດກ່ອນກອງປະຊຸມຈະມາເຖິງ, ເຈົ້າສາມາດຄິດ ແລະ ອະທິຖານກ່ຽວກັບຄຳຖາມເຫລົ່ານັ້ນ.
3. ໃຫ້ຟັງຢ່າງລະມັດລະວັງລະຫວ່າງກອງປະຊຸມໃຫຍ່ (ອາດເປັນການດີຖ້າຈະຂຽນບາງຂໍ້ຄວາມໄວ້). ແລ້ວໃຫ້ຂຽນວິທີທີ່ພຣະຜູ້ເປັນເຈົ້າຕອບຄຳຖາມຂອງເຈົ້າ—ຜ່ານຜູ້ນຳຂອງສາສນາຈັກ—.
4. ໃນເຈ້ຍອີກໃບໜຶ່ງ, ເຈົ້າສາມາດແຕ້ມຮູບກ່ຽວກັບຕົນເອງພວມເຮັດສິ່ງທີ່ເຈົ້າໄດ້ຮຽນຮູ້.

ຂວາ: ຮູບພາບແຕ້ມ ໂດຍ ແລສ ນຽວເຊິນ

© 2011 ໂດຍ Intellectual Reserve, Inc. ສະຫງວນລິຂະສິດທຸກປະການ. ຈັດພິມໃນສະຫະລັດອາເມຣິກາ. ສະບັບເປັນພາສາອັງກິດໄດ້ຮັບອະນຸຍາດ: 6/10. ການແປໄດ້ຮັບອະນຸຍາດ: 6/10. ແປຈາກ *First Presidency Message, September 2011.* Laotian. 09769 331

# ເພີ່ມຄວາມເຂັ້ມແຂງໃຫ້ແກ່ຄອບຄົວໂດຍການເພີ່ມພູນທາງວິນຍານ

ສັດທາ • ຄອບຄົວ • ສົງເຄາະ

*ໃຫ້ສຶກສາຂ່າວສານນີ້, ແລະ ເມື່ອເໝາະສົມ ໃຫ້ສົນທະນາກ່ຽວກັບມັນນຳເອື້ອຍນ້ອງທີ່ທ່ານໄປຢ້ຽມຢາມ. ໃຫ້ໃຊ້ຄຳຖາມຕ່າງໆເພື່ອຊ່ອຍທ່ານເພີ່ມຄວາມເຂັ້ມແຂງໃຫ້ແກ່ເອື້ອຍນ້ອງ ແລະ ເຮັດໃຫ້ສະມາຄົມສະຕີສົງເຄາະເປັນກິດຈະກຳໜຶ່ງໃນຊີວິດຂອງທ່ານ.*

ຈູລີ ບີ ເບັກ, ປະທານສະມາຄົມສະຕີສົງເຄາະສາມັນ ໄດ້ກ່າວວ່າ: "ຂ້າພະເຈົ້າມີປະຈັກພະຍານອັນແຮງກ້າ ກ່ຽວກັບຄຸນຄ່າຂອງທິດາຂອງພຣະເຈົ້າ.... ຂ້າພະເຈົ້າຮູ້ສຶກວ່າ ບໍ່ເຄີຍມີມາກ່ອນທີ່ຕ້ອງການເພີ່ມສັດທາ ແລະ ຄວາມຊອບທຳສ່ວນຕົວຫລາຍກວ່າຕອນນີ້. ບໍ່ເຄີຍມີມາກ່ອນທີ່ຕ້ອງການຄອບຄົວ ແລະ ບ້ານເຮືອນທີ່ເຂັ້ມແຂງຫລາຍກວ່າຕອນນີ້."

ເອື້ອຍນ້ອງສາມາດຊ່ອຍສ້າງບ້ານເຮືອນ ແລະ ຄອບຄົວໃຫ້ເຂັ້ມແຂງ ເມື່ອເຂົາເຈົ້າກະທຳຕາມການເປີດເຜີຍສ່ວນຕົວ. "ຄວາມສາມາດທີ່ຈະໃຫ້ຕົນເໝາະສົມ, ໄດ້ຮັບ, ແລະ ກະທຳຕາມການເປີດເຜີຍເປັນຄວາມສາມາດທີ່ສຳຄັນທີ່ສຸດທີ່ຈະຫາໄດ້ໃນຊີວິດນີ້," ຊິດສະເຕີ ເບັກ ກ່າວຕື່ມ. "ການເໝາະສົມຕໍ່ພຣະວິນຍານຂອງພຣະຜູ້ເປັນເຈົ້າເລີ່ມຕົ້ນດ້ວຍຄວາມປາຖະໜາຢາກມີພຣະວິນຍານນັ້ນ ແລະ ການມີຄ່າຄວນໃນລະດັບໃດໜຶ່ງໂດຍສະເພາະ. ການຮັກສາພຣະບັນຍັດ, ການກັບໃຈ, ແລະ ການຕໍ່ພັນທະສັນຍາທີ່ໄດ້ເຮັດໄວ້ໃນຕອນຮັບບັບຕິສະມາ ຈະນຳໄປສູ່ພອນທີ່ຈະມີພຣະວິນຍານຂອງພຣະຜູ້ເປັນເຈົ້າສະຖິດຢູ່ກັບເຮົາຕະຫລອດເວລາ. ການເຮັດ ແລະ ຮັກສາພັນທະສັນຍາຂອງພຣະວິຫານ ກໍຈະເພີ່ມຄວາມເຂັ້ມແຂງທາງວິນຍານ ແລະ ພະລັງໃຫ້ແກ່ຊີວິດຂອງສະຕີເໝືອນກັນ. ຄຳຕອບຕໍ່ຄຳຖາມອັນຫຍຸ້ງຍາກຫລາຍຢ່າງຈະພົບເຫັນຈາກການອ່ານພຣະຄຳພີ ເພາະວ່າພຣະຄຳພີເປັນສິ່ງຊ່ອຍເຫລືອໃຫ້ແກ່ການເປີດເຜີຍ.... ການອະທິຖານທຸກວັນກໍເປັນສິ່ງສຳຄັນຫລາຍຕໍ່ການມີພຣະວິນຍານຂອງພຣະຜູ້ເປັນເຈົ້າສະຖິດຢູ່ກັບເຮົາ."[1]

ເຮົາຍັງໄດ້ເພີ່ມຄວາມເຂັ້ມແຂງທາງວິນຍານໃຫ້ແກ່ຄົນໃນຄອບຄົວຂອງເຮົານຳອີກ ເມື່ອເຮົາຊ່ອຍເຂົາເຈົ້າໃຫ້ເຂົ້າໃຈແຜນນິລັນດອນຂອງພຣະບິດາເທິງສະຫວັນ. "ເຮົາຈະສາມາດເຮັດຫຍັງໄດ້ແດ່ ເພື່ອຕຽມລູກໆຂອງເຮົາທາງວິນຍານສຳລັບບົດບາດນິລັນດອນຂອງເຂົາ?" ແອວເດີ ເອັມ ຣະໂຊ ບາເລີດ ແຫ່ງສະພາອັກຄະສາວົກສິບສອງຖາມ. "ບາງທີຄຳຕອບສະຫລຸບຄື: "ສອນເຂົາໃຫ້ຮູ້ວິທີດຳລົງຊີວິດຕາມຫລັກທຳພຣະກິດຕິຄຸນ." ຄຳສອນນີ້ມາເຖິງຜ່ານການອະທິຖານທຸກວັນ, ສຶກສາພຣະຄຳພີ, ແລະ ການກິນເຂົ້ານຳກັນຕະຫລອດທັງການສັງສັນໃນຄອບຄົວປະຈຳອາທິດ ແລະ ການໄປໂບດ. ແອວເດີ ບາເລີດ ໄດ້ອະທິບາຍວ່າ: "ເຮົາຕຽມແຕ່ລະວັນ, ໃນຕອນນີ້, ສຳລັບຊີວິດນິລັນດອນ. ຖ້າເຮົາບໍ່ຕຽມສຳລັບຊີວິດນິລັນດອນ, ແລ້ວເຮົາຈະຕຽມສຳລັບບາງສິ່ງທີ່ນ້ອຍກວ່ານັ້ນ, ບາງທີນ້ອຍທີ່ສຸດ."[2]

## *ຈາກພຣະຄຳພີ*

ສຸພາສິດ 22:6; 1 ໂຢຮັນ 3:22; Doctrine and Covenants 11:13–14; 19:38; 68:25.

## *ຈາກປະຫວັດສາດຂອງເຮົາ*

ສາສດາໂຈເຊັບ ສະມິດ ໄດ້ສອນບັນດາເອື້ອຍນ້ອງໃນກອງປະຊຸມສະມາຄົມສະຕີສົງເຄາະ ເດືອນເມສາ 1842 ວ່າເຂົາເຈົ້າມີໜ້າທີ່ຮັບຜິດຊອບອັນສຳຄັນທີ່ຈະສະແຫວງຫາຄວາມລອດໃຫ້ແກ່ຕົນເອງ. ເພິ່ນກ່າວວ່າ, "ຫລັງຈາກຄຳແນະນຳ [ຂອງຂ້າພະເຈົ້າ], ພວກທ່ານຈະຕ້ອງຮັບຜິດຊອບຕໍ່ຄວາມຜິດບາບຂອງຕົນເອງ; ມັນເປັນຄວາມປາຖະໜາອັນມີກຽດທີ່ພວກທ່ານຄວນເດີນໄປຕໍ່ພຣະພັກຂອງພຣະບິດາເທິງສະຫວັນ ເພື່ອຊ່ອຍຕົນເອງໃຫ້ລອດ; ເຮົາທຸກຄົນມີຄວາມຮັບຜິດຊອບຕໍ່ພຣະເຈົ້າສຳລັບວິທີທີ່ເຮົາພັດທະນາຄວາມສະຫວ່າງ ແລະ ສະຕິປັນຍາທີ່ພຣະຜູ້ເປັນເຈົ້າປະທານໃຫ້ເຮົາເພື່ອຊ່ອຍຕົນເອງໃຫ້ລອດ."[3] ເພິ່ນໄດ້ຊ່ອຍເຫລືອເຂົາເຈົ້າໃຫ້ເປັນຄົນຊອບທຳ, ທີ່ຈະກາຍເປັນຄົນສັກສິດ, ແລະ ທີ່ຈະຕຽມຕົວສຳລັບພິທີການ ແລະ ພັນທະສັນຍາໃນພຣະວິຫານ.

ແຫລ່ງອ້າງອີງ


1. Julie B. Beck, "And upon the Handmaids in Those Days Will I Pour Out My Spirit," *Liahona,* May 2010, 10, 11.
2. M. Russell Ballard, "Spiritual Development," *Ensign,* Nov. 1978, 65, 66.
3. *Teachings of Presidents of the Church: Joseph Smith* (2007), 355.

### *ເຮົາສາມາດເຮັດຫຍັງແດ່?*

1. ເຮົາຈະສາມາດຊ່ອຍເຫລືອເອື້ອຍນ້ອງໃຫ້ເປັນຄົນກຸ້ມຕົນເອງທາງວິນຍານຫລາຍຂຶ້ນໄດ້ແນວໃດ?

2. ເຮົາຈະເພີ່ມຄວາມສາມາດຂອງເຮົາໃຫ້ຮູ້ຈັກ ແລະ ຕອບຮັບພຣະວິນຍານສັກສິດໄດ້ແນວໃດ?

ຮູບພາບແຕ້ມ ໂດຍ ແວວເດັນ ຊີ ແອນເດີເຊິນ

ສຳລັບລາຍລະອຽດເພີ່ມເຕີມ, ໃຫ້ເປີດເບິ່ງທີ່ www.reliefsociety.lds.org.

© 2011 ໂດຍ Intellectual Reserve, Inc. ສະຫງວນລິຂະສິດທຸກປະການ. ຈັດພິມໃນສະຫະລັດອາເມຣິກາ. ສະບັບເປັນພາສາອັງກິດໄດ້ຮັບອະນຸຍາດ: 6/10. ການແປໄດ້ຮັບອະນຸຍາດ: 6/10. ແປຈາກ *Visiting Teaching Message, September 2011.* Laotian. 09769 331